ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ອີທີແອລ ມະຫາຊົນ

ສະຫະກອນ ອອມຊັບ-ສິນເຊື່ອ ອທອ

ເລກທີ .124../ສອສ.ອທອ

ວັນທີ......24/12/14...

## ແຈ້ງການ

ເຖິງ: ບັນດາພະແນກ, ສາຂາ ອທອ ປະຈຳແຂວງ ແລະ ສະມາຊິກ ສອສ.

ເລື່ອງ: ການປັນຜົນ 6 ເດືອນທ້າຍປີ 2014, ການໃຫ້ກູ້ຢືມ, ການປ່ຽນແປງຮຸ້ນງວດ 6 ເດືອນຕົ້ນປີ 2015.

- ອີງຕາມກົດລະບຽບພາຍໃນຂອງສະຫະກອນ ອອມຊັບ-ສິນເຊື່ອ ອທອ ສະບັບເລກທີ: 005/ສອສ, ລົງວັນທີ 28/01/2013.
- ອີງຕາມບົດບັນທຶກ ກອງປະຊຸມ ສະພາບໍລິຫານ ສະຫະກອນ ອອມຊັບ-ສິນເຊື່ອ ສະບັບເລກທີ: 122/ສອສ.ອທອ ລົງວັນທີ 23/12/2014 ວ່າດ້ວຍການປະຕິບັດແຜນການ 6 ເດືອນທ້າຍປີ 2014 ແລະ ແຜນການ 6 ເດືອນຕົ້ນປີ 2015.

ຜູ້ອຳນວຍການ ສະຫະກອນອອມຊັບ-ສິນເຊື່ອ ອທອ ຂໍຖືເປັນກຽດແຈ້ງມາຍັງບັນດາພະແນກ, ສາຂາ ອທອ ປະຈຳແຂວງ ເພື່ອແຈ້ງຕໍ່ສະມາຊິກ ສອສ ທຸກທ່ານຊາບ ການປັນຜົນ 6 ເດືອນທ້າຍປີ 2014, ການເພີ້ມ, ຫຼຸດ, ຖອນຮຸ້ນ ໃນງວດ 6 ເດືອນຕົ້ນປີ 2015 ດັ່ງນີ້ :

1. <u>ການປ່ຽນແປງຮຸ້ນ:</u>

1.1 ເປີດຮັບສະໝັກສະມາຊິກ ສອສ ໃໝ່ ທີ່ມີເງື່ອນໄຂດັ່ງນີ້: ພະນັກງານຖາວອນ, ພະນັກງານທົດລອງວຽກ.

1.2 ການຖອກຮຸ້ນ: ຕ່ຳສຸດ 1 ຮຸ້ນ = 10,000 ກີບ/ຄົນ/ເດືອນ ແລະ ສູງສຸດ 50 ຮຸ້ນ = 500,000 ກີບ/ຄົນ/ເດືອນ.

1.3 ສຳລັບສະມາຊິກ ຜູ້ທີ່ໄດ້ຖອກຮຸ້ນຜ່ານມາກາຍຈຳນວນ 50 ຮຸ້ນ ແມ່ນ ສອສ ຈະປັບຫລຸດໃຫ້ເຫລືອ 50 ຮຸ້ນ ໂດຍບໍ່ໄດ້ປະກອບເອກະສານ.

1.4 ການຖອນຮຸ້ນ: ໃຫ້ສະມາຊິກຮັກສາຮຸ້ນໄວ້ນຳ ສອສ ບໍ່ໃຫ້ຫຼຸດ 10 ຮຸ້ນ =100,000 ກີບ.

1.5 ສະມາຊິກຜູ້ທີ່ມີຈຸດປະສົງຖອນຮຸ້ນ ຫຼື ເພີ້ມ/ຫຼຸດ ໃຫ້ປະກອບແບບຟອມ ສົ່ງໃຫ້ ທ່ານ ນ. ສີສຸພັນ ແກ້ວມະນີວົງ ຂາເຂົ້າ-ຂາອອກ ຂອງ ສອສ ຜ່ານລະບົບ Report ພະແນກ ບໍລິຫານ, ເບີໂທ 22210090, ເລີ້ມແຕ່ ວັນທີ 5-9/01/2015.

1.6 ກຳນົດການຈ່າຍເງິນຖອນຮຸ້ນ ວັນທີ 26-29/01/2015.

1.7 ກໍລະນີ ພະນັກງານຂອງທ່ານຫາກອອກໄປປະຕິບັດວຽກງານຢູ່ຕ່າງແຂວງໃນໄລຍະປະກາດການເພີ້ມ/ຫຼຸດ ແລະ ສະໝັກໃໝ່ ແມ່ນໃຫ້ທ່ານພົວພັນຫາສະມາຊິກຂອງທ່ານໃຫ້ປະກອບແບບຟອມໃຫ້ທັນເວລາດັ່ງກ່າວ. ຖ້າຊັກຊ້າຖືວ່າສະລະສິດ.

2. <u>ການປັນຜົນງວດ 6 ເດືອນທ້າຍປີ 2014:</u>

2.1 ສຳລັບຮຸ້ນສະສົມໃນຕົ້ນງວດ ປະຕິບັດເງິນປັນຜົນ = 1,000 ກີບ ຕໍ່ ຮຸ້ນ.

2.2 ສຳລັບຮຸ້ນສະສົມໃນງວດ ປະຕິບັດເງິນປັນຜົນ = 600 ກີບ ຕໍ່ ຮຸ້ນ.

2.3 ກຳນົດການປັນຜົນງວດ 6 ເດືອນທ້າຍປີ 2014 ວັນທີ່ 26 ແລະ 29 ທັນວາ 2014.

3. <u>ການກູ້ຢືມ:</u>

3.1 ກູ້ຢືມແບບປົກກະຕິ:

- ເງິນເດືອນຄ້ຳປະກັນ: ວົງເງິນກູ້ສູງສຸດ 60 ລ້ານກີບ/ສັນຍາ, ດອກເບ້ຍ 1,7 %, ໄລຍະເວລາ 18 ເດືອນ.
- ຫລັກຊັບ (ດິນ, ຮຸ້ນສະສົມ)ຄ້ຳປະກັນ: ວົງເງິນກູ້ສູງສຸດ 60 ລ້ານກີບ/ສັນຍາ, ອັດຕາດອກເບ້ຍ 1.7 %, ໄລຍະເວລາ 36 ເດືອນ.

3.2 ກູ້ຢືມແບບພິເສດ:

- ວົງເງິນສູງສຸດ 300 ລ້ານກີບ, ດອກເບ້ຍ 1,7% / ປີ (ໄລຍະເວລາ 1 ປີ); ດອກເບ້ຍ 1,8% / ປີ (ໄລຍະເວລາ 2 ປີ).

3.3 ເງື່ອນໄຂເພີ້ມຕື່ມ:

- ຄ່າແບບຟອມກູ້ 10,000ກີບ/ສະບັບ, ປ່ຽນແປງຮຸ້ນ 5,000ກີບ/ສະບັບ.
- ຄ່າປັບໃໝ 0,4% ຕໍ່ ວັນຂອງວົງເງິນທີ່ຄ້າງສໍາລະໃນສັນຍາ (ສໍາລັບເງິນກູ້ແບບພິເສດ).

3.4 ການຜ່ອນຊື້ສິນຄ້າຮ່ວມກັບຮ້ານຂາຍເຄື່ອງເອເລັກໂຕູນິກ (ປະຕິບັດຄືກັບ ການກູ້ຢືມປົກກະຕິ) ຄື:

- ຮ້ານ ລາວ ໂມບາຍ ກຣຸບ ທີ່ນະຄອນຫລວງວຽງຈັນ ແລະ ຢູ່ສາຂາ ແຂວງ ສະຫວັນນະເຂດ ແລະ ແຂວງ ຈໍາປາສັກ.
- ຮ້ານ Samsung sokxay ທີ່ນະຄອນຫລວງວຽງຈັນ.
- ຮ້ານ S Studio ທີ່ນະຄອນຫລວງວຽງຈັນ.

4. <u>ວິທີຈັດຕັ້ງປະຕິບັດ:</u>

ການໂອນເງິນປັນຜົນຈະໄດ້ປະຕິບັດຕາມການສັງລວມເລກບັນຊີ ຂອງ ບັນດາພະແນກ ແລະ ສາຂາແຂວງ ທີ່ໄດ້ແຈ້ງໃຫ້ ສອສ ຄື: ນະຄອນຫລວງວຽງຈັນ ແມ່ນ ທະນາຄານການຄ້າ , ສາຂາແຂວງແມ່ນ ທະນາຄານພັດທະນາລາວ.

ດັ່ງນັ້ນ, ຈິ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

ຜູ້ອໍານວຍການ ສອສ

ບໍລິສັດ ອີທີແອລ ມະຫາຊົນ
ສະຫະກາບອອມຊັບ-ສິນເຊື່ອ

ທ່ານນາງ ຊຽວວິໄຟ ພະຈັນ